# ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ
# (ປະຈຳ 6 ເດືອນ ຕົ້ນ ປີ 2015)

## 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດປະຈຳ 6 ເດືອນຕົ້ນປີ 2015 ທຽບກັບ 6 ເດືອນທ້າຍປີ 2014 ທີ່ຜ່ານມາແມ່ນມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ**: ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 1,19%, S&P500 1,90% ແລະ NASDAQ ປັບຕົວເພີ່ມຂຶ້ນ 7,38%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນ ເນື່ອງຈາກການລາຍງານຕົວເລກການຈ້າງວຽກຂະແໜງການອື່ນ ນອກຈາກຂະແໜງກະສິກຳ ເພີ່ມຂຶ້ນ 257.000 ຄົນ ແລະ ຜົນການດຳເນີນທຸລະກິດຂອງບັນດາບໍລິສັດເອກະຊົນຂອງ ສ.ອາເມຣິກາ ກໍ່ອອກມາດີ ນອກນີ້ຍັງໄດ້ຮັບຜົນກະທົບດ້ານບວກ ຈາກການຄາດຄະເນວ່າ ທະນາຄານກາງ ສ. ອາເມລິກາ ອາດຈະຊະລໍການປັບຂຶ້ນອັດຕາດອກເບ້ຍ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ**: ດັດຊະນີ ເອີຣົບ (Eurofirst 300) ປັບຕົວເພີ່ມຂຶ້ນ 12,39%, ຝຣັ່ງ (CAC40) 14,25%, ລຸກຊໍາບວກ (LUXXX) 10,54%, ອັງກິດ (FTSE100) 2,52% ແລະ ເຢຍລະມັນ (DAX) 12,80%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວເພີ່ມຂຶ້ນ ເນື່ອງຈາກທະນາຄານກາງເອີຣົບ (ECB) ຕັດສິນໃຈປັບເພດານການປ່ອຍເງິນກູ້ສຸກເສີນ ສຳລັບພາກທະນາຄານຂອງເກຼັກ ເປັນ 68,30 ຕື້ຢູໂຣ ຈາກລະດັບ 65 ຕື້ຢູໂຣ ຫຼັງຈາກທີ່ວົງເງິນເດີມໄດ້ໝົດອາຍຸ ແລະ ໄດ້ຊື້ພັນທະບັດຂອງລັດຖະບານໃນກຸ່ມປະເທດເອີຣົບ (Eurozone) ເປັນຈຳນວນເງິນ 9,751 ພັນລ້ານເອີຣົບ ຊຶ່ງຊ່ວຍໃຫ້ຄ່າໃຊ້ຈ່າຍໃນການກູ້ຢືມ ແລະ ອັດຕາດອກເບ້ຍຂອງລັດຖະບານຕ່ຳລົງ, ດັດຊະນີຝ່າຍຈັດຊື້ (PMI) ພາກບໍລິການຂອງກຸ່ມປະເທດເອີຣົບ (Eurozone) ໃນເດືອນ ມີນາ ເພີ່ມຂຶ້ນ ຢູ່ທີ່ 54,2 ຈາກ 53,7 ໃນເດືອນ ກຸມພາ, ພ້ອມນັ້ນ ການອ່ອນຄ່າຂອງສະກຸນເງິນເອີຣົບຊ່ວຍຊຸກຍູ້ທຸລະກິດກຸ່ມບໍລິສັດສົ່ງອອກໃນກຸ່ມລົດຍົນ ແລະ ຜະລິດຕະພັນເຄມີ ສົ່ງຜົນໃຫ້ຜົນປະກອບການຂອງບໍລິສັດເອກະຊົນດີກວ່າທີ່ຄາດການໄວ້.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຍີ່ປຸ່ນ (NIKKEI225) ປັບຕົວເພີ່ມຂຶ້ນ 14,49%, ສປ.ຈີນ (SHENZHEN) 87,11%, ສປ.ຈີນ (SHANGHAI) 44,06%, ຟີລິບປິນ (PCOMP) 6,67%, ສສ.ຫວຽດນາມ (HANOI) 7,11%, ສິງກະໂປ (STRAIT TIMES) 0,65%, ສສ. ຫວຽດນາມ (HOCHIMIN) 11,78%, ສ.ເກົາຫຼີ (KOSPI) 6,12%, ຮ່ອງກົງ (HANG SENG) 15,76% ແລະ ກຳປູເຈຍ (CSX) 0,49%. ສ່ວນ ດັດຊະນີ ອາຊຽນ (ASEAN 40) ປັບຕົວຫຼຸດລົງ -4,45%, ໄທ (SET) - 1,51% ແລະ ອິນໂດເນເຊຍ (JCI) - 3,10%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ປັບຕົວເພີ່ມຂຶ້ນ ເນື່ອງຈາກທະນາຄານກາງຂອງ ສປ. ຈີນ ໄດ້ປ່ອຍເງິນກູ້ໄລຍະສັ້ນ (ໄລຍະ 3 ເດືອນ) ມູນຄ່າ 8,1 ພັນລ້ານໂດລາສະຫະລັດ ເຂົ້າສູ່ທະນາຄານຫຼາຍແຫ່ງ ເພື່ອກະຕຸ້ນເສດຖະກິດ ແລະ ໄດ້ປັບຫຼຸດອັດຕາເງິນສຳຮອງ (RRR: Reserve Requirement Ratio) ລົງອີກ 1%. ນອກນີ້ຍັງມີການເປີດເຜີຍດັດຊະນີລາຄາຜູ້ບໍລິໂພກ (CPI) ທີ່ເປັນຕົວວັດແທກເສດຖະກິດສຳຄັນ ໄດ້ຂະຫຍາຍຕົວ 1,4%, ມີການເຊື່ອມໂຍງການຊື້-ຂາຍລະຫວ່າງຕະຫຼາດຮຸ້ນຊຽງໄຮ້ ແລະ ຕະຫຼາດຮຸ້ນຮ່ອງກົງ ເຮັດໃຫ້ກະແສເງິນລົງທຶນເພີ່ມສູງຂຶ້ນຫຼາຍ ນັບຕັ້ງແຕ່ເດືອນ ພະຈິກທີ່ຜ່ານມາ ຊຶ່ງຜູ້ລົງທຶນຈີນໄດ້ເທຂາຍຮຸ້ນຢູ່ຕະຫຼາດຮຸ້ນຊຽງໄຮ້ ແລະ ເຂົ້າຊື້ຮຸ້ນໃນຕະຫຼາດຮຸ້ນຮ່ອງກົງທີ່ມີລາຄາຖືກກວ່າ ແລະ ມີການຄາດຄະເນວ່າ ເສດຖະກິດຂອງຍີ່ປຸ່ນກຳລັງຈະຟື້ນຕົວ ພ້ອມກັບ ການອ່ອນຄ່າຂອງເງິນເຢນຈຶ່ງສົ່ງຜົນດີຕໍ່ການສົ່ງອອກ.

**2. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວ ໃນ 6 ເດືອນທ້າຍປີ ປິດຢູ່ທີ່ 1.360,21 ຈຸດ ຫຼຸດລົງ 3,82% ເມື່ອທຽບໃສ່ 6 ເດືອນທີ່ຜ່ານມາ, ຕະຫຼອດ 6 ເດືອນ ມີປະລິມານຊື້-ຂາຍຮຸ້ນທັງໝົດ 23,24 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 142,30 ຕື້ກີບ ເພີ່ມຂຶ້ນ 80,13% ທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 58.73% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດທີ່ພາໃຫ້ມູນຄ່າການຊື້-ຂາຍເພີ່ມສູງຂຶ້ນ ໃນ 6 ເດືອນ ຕົ້ນປີ 2015 ເນື່ອງຈາກວ່າ ໃນຕົ້ນເດືອນ ທັນວາ ປີ 2014 ໄດ້ມີບໍລິສັດຈົດທະບຽນໃໝ່ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ຄື ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.689 ກີບ ຫຼຸດລົງ 1.023 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1,6 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 11,30 ຕື້ກີບ ເພີ່ມຂຶ້ນ 4,53% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 43,48% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນຢູ່ທີ່ 9,70%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.156 ກີບ ເພີ່ມຂຶ້ນ 212 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 14,14 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 101,18 ຕື້ກີບ ເພີ່ມຂຶ້ນ 110,23% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 61,39% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.558 ກີບ ຫຼຸດລົງ 350 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10.254 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 87,75 ລ້ານກີບ ເພີ່ມຂຶ້ນ 155,02% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 47,59% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 2,70%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.015 ກີບ, ມີປະລິມານຊື້-ຂາຍທັງໝົດ 7,40 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 29,72 ຕື້ກີບ ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 25,04% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[4]

**(ຮອງ) ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

---

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

**ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

(ເດືອນ ມັງກອນ - ມິຖຸນາ 2015)

| | 6 ເດືອນ ທ້າຍປີ 2014 | | | 6 ເດືອນ ຕົ້ນປີ 2015 | | | % ການປ່ຽນແປງ | |
|---|---|---|---|---|---|---|---|---|
| | ຈຳນວນ(ລ້ານ ຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ ກີບ) | ລາຄາ | ຈຳນວນ(ລ້ານ ຮຸ້ນ) | ມູນຄ່າການຊື້ຂາຍ (ຕື້ ກີບ) | ລາຄາ | ຈຳນວນ | ມູນຄ່າ ການຊື້ ຂາຍ |
| BCEL | 1.403.368 | 10.812.324.800 | 7.000 | 1.691.707 | 11.302.105.050 | 6.300 | 20,55 | 4,53 |
| EDL-GEN | 6.931.256 | 48.133.196.200 | 7.050 | 14.140.572 | 101.188.641.500 | 7.050 | 104,01 | 110,23 |
| LWPC | 3.863 | 34.411.250 | 7.900 | 10.254 | 87.754.900 | 8.000 | 165,44 | 155,02 |
| PTL | 5.041.378 | 20.020.727.000 | 3.900 | 7.403.075 | 29.723.807.250 | 3.600 | 46,85 | 48,47 |
| **ທັງໝົດ** | 13.379.865 | 79.000.659.250 | | 23.245.608 | 142.302.308.700 | | 73,74 | 80,13 |

**ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ**

(ວັນທີ 11 ມັງກອນ - 22 ມິຖຸນາ 2015)




**ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ**

(ເດືອນ ມັງກອນ - ມິຖຸນາ 2015)



**ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ**

| ຊື່ດັດສະນີ | ປະເທດ | ດັດສະນີ 6 ເດືອນຕົ້ນປີ2015 | ດັດສະນີ 6 ເດືອນທ້າຍປີ 2014 | +/- | % |
|---|---|---|---|---|---|
| I. ສະຫະລັດ | | | | | |
| DOW | | 18,015.95 | 17,804.80 | 211.15 | 1.19 |
| NASDAQ | | 5,117.00 | 4,765.38 | 351.62 | 7.38 |
| S&P500 | | 2,109.99 | 2,070.65 | 39.34 | 1.90 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1,529.65 | 1361.07 | 168.58 | 12.39 |
| DAX | ເຢຍລະມັນ | 11,040.10 | 9786.96 | 1253.14 | 12.80 |
| FTSE100 | ອັງກິດ | 6,710.45 | 6545.27 | 165.18 | 2.52 |
| CAC40 | ຝຣັ່ງ | 4,815.37 | 4214.65 | 600.72 | 14.25 |
| LUXXX | ລຸກຊໍາບວກ | 1,669.49 | 1510.3 | 159.19 | 10.54 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 20,174.24 | 17621.4 | 2552.84 | 14.49 |
| KOSPI | ເກົາຫຼີໃຕ້ | 2,046.96 | 1928.98 | 117.98 | 6.12 |
| HANG SENG | ຮ່ອງກົງ | 26,760.53 | 23116.63 | 3643.9 | 15.76 |
| TWSE | ໄຕ້ຫວັນ | 9,128.37 | 8999.52 | 128.85 | 1.43 |
| SHANG HAI | ສປ. ຈີນ | 4,478.36 | 3108.59 | 1369.77 | 44.06 |
| Shenzhen | ສປ. ຈີນ | 2,742.18 | 1465.58 | 1276.6 | 87.11 |
| S&P/ASX200 | ອົດສະຕາລີ | 5,596.99 | 5338.64 | 258.35 | 4.84 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN 40 | ອາຊຽນ | 10,118.49 | 10590.26 | -471.77 | -4.45 |
| STRAIT TIMES | ສິງກະໂປ | 3,300.96 | 3279.53 | 21.43 | 0.65 |
| SET | ໄທ | 1,491.46 | 1514.35 | -22.89 | -1.51 |
| FBMLCI | ມາເລເຊຍ | 1,721.77 | 1715.99 | 5.78 | 0.34 |
| JCI | ອິນໂດເນເຊຍ | 4,985.00 | 5144.62 | -159.62 | -3.10 |
| PCOMP | ຟີລິບປິນ | 7,601.17 | 7125.63 | 475.54 | 6.67 |
| HOCHIMIN | ສສ. ຫວຽດນາມ | 584.70 | 523.09 | 61.61 | 11.78 |
| HANOI | ສສ. ຫວຽດນາມ | 87.10 | 81.32 | 5.78 | 7.11 |
| CSX | ກໍາປູເຈຍ | 444.69 | 442.54 | 2.15 | 0.49 |
| LSX | ລາວ | 1,399.11 | 1389.91 | 9.2 | 0.66 |
| V. ດັດສະນີກຸ່ມທະນາຄານ | | | | | |
| NASDAQBANK | ສະຫະລັດ | 2,877.47 | 2642.11 | 235.36 | 8.91 |
| SET BANK | ໄທ | 508.09 | 596.65 | -88.56 | -14.84 |